ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 24 ຫາ 27 ກໍລະກົດ 2023



ການລ້ຽງກຸ້ງກ້າມກາມ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ການລ້ຽງກຸ້ງກ້າມກາມ

ກຸ້ງກ້າມກາມ (giant freshwater prawn) ຊື່ວິທະຍາສາດ Macrobranchium rosenbergii de Man ແມ່ນກຸ້ງນ້ຳຈືດທີ່ມີຂະໜາດໃຫຍ່ ມີລົດຊາດທີ່ດີ ແລະ ລາຄາແພງ ຈັດເປັນສັດນ້ຳທີ່ມີຄວາມສຳຄັນທາງດ້ານເສດຖະກິດຊະນິດໜຶ່ງ ສາມາດນຳປຸງແຕ່ງເປັນອາຫານໄດ້ຫຼາກຫຼາຍເຊັ່ນ: ປີ້ງ, ຕົ້ມຍຳ, ຕຳ, ທອດ, ອົບ ແລະ ອື່ນໆ, ຊຶ່ງໃນປັດຈຸບັນກຸ້ງກ້າມກາມແມ່ນເປັນທີ່ຕ້ອງການຂອງຕະຫຼາດໂດຍສະເພາະໃນ ສປປ ລາວ ແມ່ນຍັງບໍ່ທັນມີການລ້ຽງເປັນຈຳນວນຫຼາຍຈຶ່ງເຮັດໃຫ້ມີການນຳເຂົ້າຈາກປະເທດໃກ້ຄຽງ. ດັ່ງນັ້ນ, ຈຶ່ງໄດ້ມີການສ້າງຄູ່ມືແນະນຳວິທີການລ້ຽງກຸ້ງສະບັບນີ້ເພື່ອເປັນບົດຮຽນ, ປະສົບການ, ການຮຽນຮູ້, ທັກສະ ແລະ ສ້າງຄວາມເຂົ້າໃຈວິທີການລ້ຽງກຸ້ງກ້າມກາມໃຫ້ແກ່ຜູ້ທີ່ມີຄວາມສົນໃຈເພື່ອເປັນແນວທາງ,ໃນການປະກອບອາຊີບ ແລະ ສ້າງລາຍຮັບ.

ກຸ້ງກ້າມກາມເປັນກຸ້ງນ້ຳຈືດຊະນິດໜຶ່ງ ທີ່ອາໄສ ຢູ່ຕາມແມ່ນ້ຳ, ລຳຄອງທົ່ວໆໄປ ແຕ່ຖ້າຮອດລະດູປະສົມພັນ ພໍ່ ແມ່ພັນ ກຸ້ງຈະໄດ້ປະສົມພັນຢູ່ແຫຼ່ງນ້ຳທຳມະຊາດປະສົມລະຫວ່າງນ້ຳຈືດ+ນ້ຳເຄັມເພື່ອວາງໄຂ່ ແລະ ລ້ຽງຕົວອ່ອນ.

ການເລືອກສະຖານທີ່: ຄວນເປັນສະຖານທີ່ຢູ່ໃກ້ເສັ້ນທາງ, ມີໄຟຟ້າ, ແຫ່ງນ້ຳທີ່ມີຄຸນນະພາບດີ, ສະອາດ ແລະ ມີນ້ຳໄຫຼຕະຫຼອດປີ ບໍ່ຄວນຢູ່ໃກ້ໂຮງງານອຸດສາຫະກຳ ແລະ ໃກ້ຊຸມຊົນຫຼາຍເກີນໄປຖ້າຈະຂຸດໜອງ ຄວນເລືອກບ່ອນທີ່ເປັນດິນໜຽວເພື່ອເກັບຮັກສານ້ຳໄດ້ດີ ເນື້ອດິນ ບໍ່ຄວນເປັນດິນສົ້ມຈະເຮັດໃຫ້ນ້ຳເປັນກົດບໍ່ເໝາະສຳລັບການຈະເລີນເຕີບໂຕຂອງກຸ້ງ (PH ທີ່ເໝາະສົມຂອງດິນປະມານ 6-7)

ຮູບແບບໜອງ: ສ່ວນຫຼາຍແມ່ນເປັນຮູບສີ່ຫຼ່ຽມ ເພາະສະດວກໃນການຈັດການຂະໜາດໜອງປະມານ 25x25 ແມັດ, ເລິກ 1 ແມັດ ຖ້າໜອງເລິກເກີນໄປຈະເຮັດໃຫ້ກຸ້ງຂາດອອກຊີເຈນໄດ້ ແຕ່ຖ້າໜອງຕື້ນເກີນໄປ ຈະເຮັດໃຫ້ແດດສ່ອງເຖິງພື້ນໜອງ ແລະ ເຮັດໃຫ້ນ້ຳຮ້ອນຈົນເກີນໄປ.



ການກະກຽມໜອງ: ສູບນ້ຳອອກຈາກໜອງກ່ອນເພື່ອຂ້າເຊື້ອ ແລະ ທຳລາຍສັດຕູຂອງກຸ້ງ ເຊັ່ນ: ປາຄໍ່, ກົບ, ຂຽດ, ປູ ໂດຍໃຊ້ປູນຂາວ ຫຼື ກາກຊາ ຫວ່ານເພື່ອບໍ່ໃຫ້ມີສັດຕູກຸ້ງ ໂດຍສະເພາະປູໂຕນ້ອຍໆ ຊຶ່ງເປັນໂຕສຳຄັນໃນການຍາດອາຫານຂອງກຸ້ງ. ການຫວ່ານປູນຂາວແມ່ນໃຊ້ອັດຕາ 60-100 ກິໂລ/ໄລ່, ຫຼັງຈາກນັ້ນຕາກໜອງໄວ້ປະມານ 1-2 ອາທິດ ເພື່ອໝັ້ນໃຈວ່າສັດຕູຂອງກຸ້ງບໍ່ມີແລ້ວຫຼັງຈາກນັ້ນ ຈຶ່ງປ່ອຍນ້ຳເຂົ້າປົກກະຕິ.

ການກຽມນ້ຳ: ຫຼັງຈາກສູບນ້ຳເຂົ້າໜອງແລ້ວຄວນປະໄວ້ປະມານ 2-3 ມື້ ເພື່ອເປັນການປັບສະພາບນ້ຳ, ທໍ່ລະບາຍນ້ຳຄວນອັດດ້ວຍດ່າງສີຟ້າ ເພື່ອປ້ອງກັນສັດຕູກຸ້ງປົນມານຳນ້ຳ, ຫຼັງຈາກນັ້ນກໍ່ໃຊ້ປຸ໋ຍສູດ 15-15-15 ໃນອັດຕາ 3 ກິໂລ/ໄລ່ ແລະ ປາປົ່ນປະສົມຮຳລະອຽດສັດສ່ວນ 1:1 ອັດຕາ 3 ກິໂລ/ໄລ່ ໂດຍລະລາຍນ້ຳ ແລ້ວຈຶ່ງຫວ່ານໃຫ້ທົ່ວໜອງເພື່ອໃຫ້ເກີດມີອາຫານທຳມະຊາດເຊັ່ນ: ໄຮນ້ຳພືດ ແລະ ໄຮ່ນ້ຳສັດ ໂດຍສັງເກດຈາກການປ່ຽນສີຂອງນ້ຳ (ສີອອກເຫຼືອງ ຫຼື ນ້ຳຕານ)

ການເລືອກແນວພັນ: ຄວນເລືອກກຸ້ງທີ່ມີລັກສະນະແຂງແຮງສົມບູນ ລຳໂຕໃສ, ຂະໜາດໃກ້ຄຽງກັນ, ເປັນລູກກຸ້ງທີ່ມີອາຍຸຢ່າງໜ້ອຍ 20 ມື້, ຄວນມີການປັບສະພາບໃຫ້ກຸ້ງ ຢູ່ໃນນ້ຳຈືດຢ່າງນ້ອຍ 3 ມື້ ກ່ອນຈະນຳເອົາມາລ້ຽງໃນໜອງ.

ຄຸນນະພາບນ້ຳທີ່ເໝາະສົມ: PH ແມ່ນ 7-8, ອອກຊີເຈນລະລາຍໃນນ້ຳ DO ແມ່ນ: ບໍ່ຄວນຫຼຸດ 4 ອຸນຫະພູມທີ່ເໝາະສົມແມ່ນ:25-32 ອົງສາ.

ການເຄື່ອນຍ້າຍ: ເວລາທີ່ດີ ແລະ ເໝາະສົມໃນການເຄື່ອນຍ້າຍກຸ້ງແມ່ນຕອນເຊົ້າມືດ ຫຼື ຕອນກາງຄືນ, ຄວາມໜາແໜ້ນແມ່ນ ປະມານ 1.000 ຫຼື 2.000 ໂຕ/ຖົງ ຂຶ້ນຢູ່ກັບຂະໜາດຂອງກຸ້ງ ແລະ ເສັ້ນທາງການເຄື່ອນຍ້າຍ.

ອັດຕາການປ່ອຍ: ອັດຕາການປ່ອຍຈະມີ 3 ແບບຄື:

1. ລະດັບຄວາມໜາແໜ້ນໜ້ອຍປະມານ: 20.000 - 24.000 ໂຕ/ໄລ່



2. ລະດັບຄວາມໜາແໜ້ນປານກາງປະມານ: 75.000 - 80.000 ໂຕ/ໄລ່

3. ລະດັບຄວາມໜາແໜ້ນຫຼາຍປະມານ 150.000 - 200.000 ໂຕ/ໄລ່

ທຸກລະດັບຈະຕ້ອງມີເຄື່ອງຕີນ້ຳປະມານ 3-4 ເຄື່ອງເພື່ອເພີ່ມອອກຊີເຈນ ແລະ ຊ່ວຍໃຫ້ກຸ້ງມີອັດຕາການລອດຕາຍສູງ.

ອາຫານ ແລະ ການໃຫ້ອາຫານ: ຄວນເປັນອາຫານຊະນິດເມັດຈົມນ້ຳ, ມີໂປຣຕີນບໍ່ຕ່ຳກວ່າ 30 ສ່ວນຮ້ອຍ,ອາຫານຄວນຢູ່ໃນນ້ຳໄດ້ຢ່າງໜ້ອຍ 4 ຊົ່ວໂມງ, ເນື່ອງຈາກກຸ້ງຈະກິນອາຫານໂດຍການໃຊ້ກ້າມໜີບ ເອົາອາຫານຖ້າອາຫານລະລາຍນ້ຳໄວ ຈະເຮັດໃຫ້ກຸ້ງໄດ້ຮັບອາຫານບໍ່ເຕັມທີ, ການໃຫ້ອາຫານຄວນໃຫ້ 3 ຄັ້ງ/ມື້ ໃນໄລຍະ 3 ເດືອນທຳອິດ, ຫຼັງຈາກນັ້ນ ຄວນໃຫ້ 2 ຄັ້ງ/ມື້, ໃນປະລິມານເໝາະສົມບໍ່ຄວນໃຫ້ຫຼາຍຈົນເກີນໄປເພາະຈະເຮັດໃຫ້ນ້ຳເໜົ່າເສຍໄດ້ງ່າຍ ອັດຕາການໃຫ້ອາຫານແມ່ນ ປະມານ 3-5 ສ່ວນຮ້ອຍ ຕໍ່ນ້ຳໜັກໂຕ (ວິທີກວດສອບການກິນອາຫານຂອງກຸ້ງແມ່ນໃຊ້ກະດົ້ງແລ້ວວາງອາຫານໃສ່ເພື່ອສະດວກໃນການດອກເບິ່ງການກິນອາຫານຂອງກຸ້ງ).

ການປ່ຽນຖ່າຍນ້ຳ: ການປ່ຽນຖ່າຍນ້ຳແມ່ນຂຶ້ນກັບອາຍຸ ແລະ ຂະໜາດຂອງກຸ້ງ, ຖ້າມີການປ່ຽນຖ່າຍນ້ຳຈະຊ່ວຍໃຫ້ກຸ້ງມີການຈະເລີນເຕີບໂຕໄດ້ດີ ກຸ້ງເປັນສັດນ້ຳທີ່ຈະເລີນເຕີບໂຕດ້ວຍການລອກຄາບ ສຳລັບກຸ້ງ 1-2 ເດືອນທຳອິດ ບໍ່ຈຳເປັນປ່ຽນຖ່າຍນ້ຳແຕ່ຄວນເຕີມນ້ຳທຸກອາທິດ ເມື່ອກຸ້ງອາຍຸຮອດ 2 ເດືອນຂຶ້ນໄປ ຄວນປ່ຽນຖ່າຍນ້ຳເດືອນ ລະ 2-4 ຄັ້ງ, ຄັ້ງລະປະມານ 1/3 ຂຶ້ນຢູ່ກັບສະພາບນ້ຳໃນໜອງ ແລະ ໄລຍະປ່ຽນນ້ຳໃໝ່ກຸ້ງຈະລອກຄາບ ແລະ ບໍ່ກິນອາຫານຫຼາຍ ສະນັ້ນຄວນຫຼຸດປະລິມານອາຫານລົງໃນໄລຍະປ່ຽນຖ່າຍນ້ຳໃໝ່.

ໄລຍະເວລາ: ເມື່ອລ້ຽງກຸ້ງໄດ້ປະມານ 6 ເດືອນກໍ່ເລີ່ມຄັດຂະໜາດ ແລະ ຈັບກຸ້ງຂາຍໄດ້ ໂດຍຫຼຸດປະລິມານນ້ຳໃນໜອງລົງເຫຼືອ ປະມານ 50 ຊັງຕີແມັດ, ແລ້ວໃຊ້ອວນ ຂະໜາດ 4 ຊັງຕີແມັດ ເພື່ອໃຫ້ກຸ້ງຂະໜາດນ້ອຍຫຼຸດອອກຈາກອວນ ເພື່ອບໍ່ໃຫ້ກຸ້ງໂຕນ້ອຍໄດ້ຮັບຜົນກະທົບ ການຈັບກຸ້ງແມ່ນຄວນຈັບຕອນເຊົ້າ ປະມານ 6-7 ໂມງ, ເພາະອາກາດບໍ່ຮ້ອນຫຼາຍເກີນໄປຈະເຮັດໃຫ້ກຸ້ງມີຄວາມສ່ຽງໃນການຕາຍໜ້ອຍລົງ ແລະ ມີຄວາມແຂງແຮງອີກດ້ວຍ.

ແຫຼ່ງຂໍ້ມູນຈາກ: ກະຊວງກະສິກຳ ແລະ ປ່າໄມ້, ກົມລ້ຽງສັດ ແລະ ການປະມົງ, ພະແນກ ປະມົງ 021 217 869

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ຫອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;